ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ໂຄງການ "ຮັກນີ້ແດ່ພີ່ນ້ອງ ປີ 2" ໂຄງການເພື່ອການສຶກສາທີ່ດີຂຶ້ນ

ຜ-ຟຟລ ໄດ້ຈັດໂຄງການຊ່ວຍເຫຼືອສັງຄົມທີ່ມີຊື່ວ່າ "ຮັກນີ້ແດ່ພີ່ນ້ອງ ປີ 2" ລະຫວ່າງວັນທີ 16-18 ເດືອນຕຸລາ ປີ 2018, ທີ່ໂຮງຮຽນບ້ານຫ້ວຍດໍາໃໝ່, ເມືອງທ່າແຕງ, ແຂວງເຊກອງ. ເຊິ່ງກິດຈະກໍານີ້ ມີຈຸດປະສົງປະກອບສ່ວນບູລະນະໂຮງຮຽນເຊັ່ນ ການເຮັດຫໍສະໝຸດ, ການຈັດຕັ້ງລະບົບການລ້າງມື, ການເຮັດໜານຜັກ ແລະ ການປູກຕົ້ນໄມ້ອ້ອມໂຮງຮຽນ. ຍັງໄດ້ມີການຈັດກິດຈະກໍາເພື່ອໃຫ້ຄວາມຮູ້ເລື່ອງສຸຂະອານະໄມໃຫ້ແກ່ນ້ອງໆເຊັ່ນ ການຖິ້ມຂີ້ເຫຍື່ອໃຫ້ຖືກບ່ອນ, ການລ້າງມື ແລະ ການຖູແຂ້ວໃຫ້ຖືກວິທີ ແລະ ໄດ້ເລົ່ານິທານສູ່ນ້ອງໆຟັງອີກດ້ວຍ. ແລະ ໄດ້ມອບອຸປະກອນການສຶກສາ ແລະ ການກິລາ, ເຊິ່ງທັງໝົດນີ້ ແມ່ນການປະກອບສ່ວນສົມທົບທຶນກັນຂອງ ຜ-ຟຟລ ແລະ ພະນັກງານ ຜ-ຟຟລ ແລະ ພາກສ່ວນຕ່າງໆໃນສັງຄົມທີ່ໃຫ້ການສະໜັບສະໜູນກິດຈະກໍາຄັ້ງນີ້ , ລວມເປັນມູນຄ່າ 40 ລ້ານ ກີບ ໂດຍການເປັນປະທານຂອງ ທ່ານ ຄໍາມະນີ ອິນທະລັງສີ, ຜູ້ອໍານວຍການເຂື່ອນໄຟຟ້າຫ້ວຍລໍາພັນໃຫຍ່.



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ. ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la,ເວັບໄຊທ໌:www.edlgen.com.la